ສະໜັບສະໜູນການສ້າງຕົ້ນສະບັບ
ໂດຍ: ອົງການ UNICEF ປະຈຳລາວ
ສະໜັບສະໜູນການພິມໂດຍ: ງົບປະມານແຫ່ງລັດ
ທະບຽນພິມເລກທີ: ...............
ຂະໜາດ 21x29,7 ຊມ ຈຳນວນ.............ຫົວ
ພິມທີ່ ບໍລິສັດ ລັດວິສາຫະກິດໂຮງພິມສຶກສາ
2016
ສະຫງວນລິຂະສິດ

ບົດເຝິກຫັດ

# ໜ່ວຍຄອບຄົວຂອງຂ້ອຍ

## ຊັ້ນອະນຸບານສຶກສາປີທີ 3



ກະຊວງສຶກສາທິການ ແລະ ກິລາ
ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ
2016

## ປຶ້ມຝຶກຫັດ

# ພໍ່ວຍຄອບຄົວຂອງຂ້ອຍ

## ຊັ້ນອະນຸບານສຶກສາ ປີທີ 3

ຮຽບຮຽງໂດຍ: ແສງມະນີ ສຸພັນທະລົບ
ຊໍ່ເນັ່ງ ຢົ່ງເນັ່ງຊົ່ງ

ກວດແກ້ໂດຍ: ດຣ. ອ່ອນແກ້ວ ນວນນະວົງ
ປາກຽນ ຫຼວງໄຊຊະນະ
ເກດ ພັນລັກ

ພິມເຂົ້າໜ້າໂດຍ: ຈັນທະໄລ ເກີດຫຼ້າ
ສີວິໄລ ແກ້ວມະນີວັນ

ກະຊວງສຶກສາທິການ ແລະ ກິລາ
ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ
2016

# ຄຳນຳ

ການກຽມຄວາມພ້ອມຂັ້ນພື້ນຖານທາງດ້ານວິທະຍາສາດເປັນເລື່ອງທີ່ຈຳເປັນ ແລະ ມີຄວາມສຳຄັນຕໍ່ການຮຽນວິທະຍາສາດໃນຊັ້ນປະຖົມ. ການສ້າງຄວາມຮູ້ຄວາມເຂົ້າໃຈຂັ້ນພື້ນຖານທາງດ້ານຄວາມຮູ້ທົ່ວໄປກ່ຽວກັບວິທະຍາສາດໃຫ້ແກ່ເດັກນ້ອຍ ດ້ວຍກິດຈະກຳທີ່ມີຄວາມມ່ວນຊື່ນກະຕຸ້ນໃຫ້ເດັກນ້ອຍໄດ້ສັງເກດ, ທົດລອງ, ຄົ້ນຄິດ ມີເຫດຜົນໃນການແກ້ໄຂບັນຫາຈະຊ່ວຍໃຫ້ເດັກນ້ອຍມັກ ແລະ ສົນໃຈຮຽນວິທະຍາສາດ ຫຼາຍຂຶ້ນ.

ປຶ້ມບົດເຝິກຫັດໜ່ວຍຄອບຄົວຂອງຂ້ອຍເຫຼັ້ມນີ້ຮຽບຮຽງຂຶ້ນ ເພື່ອເຝິກແອບທັກສະການສັງເກດ ແລະ ແອບເວົ້າຄຳສັບທີ່ນຳໃຊ້ໃນຊີວິດປະຈຳວັນ ແລະ ຄຳສັບວິທະຍາສາດທີ່ສອດຄ່ອງກັບມາດຖານສະມັດຖະພາບດ້ານການກຽມຄວາມພ້ອມທາງດ້ານວິທະຍາສາດສຳລັບເດັກນ້ອຍອາຍຸ 5 ປີ.

ປຶ້ມບົດເຝິກຫັດເຫຼັ້ມນີ້ປະກອບດ້ວຍ 4 ຫົວຂໍ້ເນື້ອໃນທີ່ນຳມາເຝິກແອບເວົ້າຄຳສັບພື້ນຖານກ່ຽວກັບເລື່ອງທຳມະຊາດອ້ອມຕົວເຮົາມີດັ່ງນີ້:

1. ຄອບຄົວ ແລະ ຍາດຕິພີ່ນ້ອງ.
2. ການປະຕິບັດຕົນໃນຄອບຄົວ.
3. ເຮືອນ ແລະ ການຮັກສາຄວາມສະອາດ.
4. ຫ້ອງໃນເຮືອນ ແລະ ເຄື່ອງໃຊ້.

ການນຳໃຊ້ປຶ້ມບົດເຝິກຫັດໜ່ວຍຄອບຄົວຂອງຂ້ອຍ ເຂົ້າໃນການກຽມຄວາມພ້ອມໃນການຮຽນຮູ້ທາງດ້ານວິທະຍາສາດໃຫ້ມີຄຸນນະພາບຄູສອນ ແລະ ຜູ້ປົກຄອງຄວນໃຊ້ພາຍຫຼັງທີ່ເດັກນ້ອຍໄດ້ຮຽນຮູ້ສິ່ງທີ່ມີໃນກິດຈະກຳວົງມົນຜ່ານມາແລ້ວ, ພ້ອມກັນນັ້ນນາຍຄູ ແລະ ຜູ້ປົກຄອງຊ່ວຍແນະນຳໃຫ້ ເດັກນ້ອຍໄດ້ເຝິກທັກສະການເວົ້າຊື່ທີ່ມີໃນຮູບພາບ ແລະ ການທາສີຮູບຕາມເນື້ອໃນທີ່ມີໃນປຶ້ມຫົວນີ້ດ້ວຍຕົນເອງໃຫ້ຫຼາຍຂຶ້ນ.

ພ້ອມດຽວກັນນີ້ຄະນະຮັບຜິດຊອບໃນການປັບປຸງ ແລະ ຮຽບຮຽງປຶ້ມຄູ່ມືຄູສະບັບນີ້ມີຄວາມຍິນດີເປັນ ຢ່າງຍິ່ງຮັບເອົາທຸກຄຳຄິດເຫັນຂອງບັນດາທ່ານ ເພື່ອປັບປຸງປຶ້ມບົດເຝິກຫັດດັ່ງກ່າວໃຫ້ມີຄຸນນະພາບດີຂຶ້ນ.

ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ

# ສາລະບານ

ໜ້າ

**ກິດຈະກຳການຮຽນ-ການສອນພ່ວຍຄອບຄົວຂອງຂ້ອຍ.** .......... 1
**1. ຄອບຄົວ ແລະ ຍາດຕິພີ່ນ້ອງ ອາທິດທີ 1** .......... **2**
- ສະມາຊິກໃນຄອບຄົວ .......... 3
- ວຽກຂອງພໍ່ ແລະ ແມ່ .......... 4
- ວຽກຂອງອ້າຍ, ເອື້ອຍ ແລະ ຕົນເອງ .......... 5
- ການຊ່ວຍເຫຼືອກັນ ໃນຄອບຄົວ .......... 6
- ການປະຢັດນ້ຳ ແລະ ໄຟ .......... 7
- ຍາດຕິພີ່ນ້ອງຂອງພໍ່ .......... 8
- ຍາດຕິພີ່ນ້ອງຂອງແມ່ .......... 9
- ການຊ່ວຍເຫຼືອຍາດຕິພີ່ນ້ອງ .......... 10
- ຄວາມອົບອຸ່ນໃນຄອບຄົວ .......... 11
**2. ການປະຕິບັດຕົນໃນຄອບຄົວ ອາທິດທີ 2** .......... **12**
- ການກິນ ແລະ ດື່ມ .......... 13
- ການປະຕິບັດຕົນໃນການນັ່ງ .......... 14
- ການປະຕິບັດຕົນໃນການຍ່າງ ແລະ ການນອນ .......... 15
- ການປະຕິບັດຕົນໃນການອໍ່ອະນຸຍາດ ແລະ ການຮັບສິ່ງຂອງ .......... 16
- ການນົບ .......... 17
- ເຄື່ອງຮຽນ ແລະ ການປະຢັດ .......... 18
- ເຄື່ອງນຸ່ງ ແລະ ການປະຢັດ .......... 19
- ການປະຢັດເຄື່ອງຫຼິ້ນ .......... 20
**3. ເຮືອນ ແລະ ການຮັກສາຄວາມສະອາດ ອາທິດທີ 3** .......... **21**
- ປະເພດຂອງເຮືອນ .......... 22
- ລັກສະນະຂອງເຮືອນ .......... 23
- ເຮືອນໄມ້ .......... 24
- ເຮືອນກໍ່ປະສົມໄມ້ .......... 25
- ເຮືອນກໍ່ .......... 26
- ເຄື່ອງໃຊ້ ແລະ ການຮັກສາຄວາມສະອາດເຮືອນ .......... 27

**4. ຫ້ອງໃນເຮືອນ ແລະ ເຄື່ອງໃຊ້ ອາທິດທີ 4 ........ 28**
- ຫ້ອງໃນເຮືອນ ........ 29
- ຫ້ອງນອນ ........ 30
- ການຮັກສາຄວາມສະອາດຫ້ອງນອນ ........ 31
- ຫ້ອງຮັບແຂກ ........ 32
- ການຮັກສາຄວາມສະອາດຫ້ອງຮັບແຂກ ........ 33
- ຫ້ອງແຕ່ງກິນ ........ 34
- ການຮັກສາຄວາມສະອາດຫ້ອງແຕ່ງກິນ ........ 35
- ຫ້ອງອາບນ້ຳ ແລະ ຫ້ອງວິດຖ່າຍ ........ 36

# ຄອບຄົວຂອງຂ້ອຍ









**ຫົວຂໍ້ ການຮຽນຂອງແຕ່ລະອາທິດໜ່ວຍຄອບຄົວຂອງຂ້ອຍປະກອບມີ:**

1. ຄອບຄົວ ແລະ ຍາດຕິພີ່ນ້ອງ.
2. ການປະຕິບັດຕົນໃນຄອບຄົວ.

3 ເຮືອນ ແລະ ການຮັກສາຄວາມສະອາດ.

4. ຫ້ອງໃນເຮືອນ ແລະ ເຄື່ອງໃຊ້.

# ຄອບຄົວ ແລະ ຍາດຕິພີ່ນ້ອງ





**ຫົວຂໍ້ການຮຽນອາທິດທີ 1 ຄອບຄົວ ແລະ ຍາດຕິພີ່ນ້ອງ:**

1. ສະມາຊິກໃນຄອບຄົວ.
2. ວຽກແຕ່ລະຄົນໃນຄອບຄົວ.
3 ການຊ່ວຍເຫຼືອ ແລະ ການປະຢັດ.
4. ຍາດຕິພີ່ນ້ອງ.
5. ຄວາມອົບອຸ່ນໃນຄອບຄົວ.

# ສາມະຊິກໃນຄອບຄົວ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກສາມະຊິກໃນຄອບຄົວ, ຈຳນວນຄົນ, ຊື່ແຕ່ລະຄົນໃນຄອບຄົວ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນໃຜ? ໃນຄອບຄົວຫຼານມີໃຜແດ່? ແຕ່ລະຄົນຊື່ຫຍັງ? ຈຳນວນຄົນໃນຄອບຄົວຂອງຫຼານມີຈັກຄົນ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ສາມະຊິກໃນຄອບຄົວປະກອບມີພໍ່, ແມ່, ອ້າຍ, ເອື້ອຍ, ນ້ອງ, ພໍ່ເຖົ້າ, ແມ່ເຖົ້າ, ພໍ່ປູ່, ແມ່ຍ່າ; ຈຳນວນຄົນໃນຄອບຄົວຂອງຫຼານມີ... ແລະ ຊື່ຂອງແຕ່ລະຄົນໃນຄອບຄົວຂອງຫຼານຄື ....
- ໃຫ້ເດັກນ້ອຍທາສີຮູບຄົນໂດຍນຳໃຊ້ສີຕາມໃຈ.

# ວຽກຂອງພໍ່ ແລະ ແມ່







**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກວຽກຂອງພໍ່, ແມ່; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ວຽກຂອງພໍ່ ແລະ ແມ່ເຮັດຫຍັງ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ວຽກຂອງພໍ່ ແລະ ແມ່ເກືອ ເປັດ, ເກືອໄກ່, ປຸງແຕ່ງອາຫານ, ຊັກເຄື່ອງ ແລະ ລີດເຄື່ອງນຸ່ງ.
- ໃຫ້ເດັກນ້ອຍທາສີຮູບຄົນ ແລະ ສັດ ໂດຍນຳໃຊ້ສີຕາມໃຈ.

# ວຽກຂອງອ້າຍ, ເອື້ອຍ ແລະ ຕົນເອງ







**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກວຽກຂອງອ້າຍ, ເອື້ອຍ ແລະ ຕົນເອງ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ເດັກນ້ອຍກຳລັງເຮັດຫຍັງ? ວຽກຂອງອ້າຍ ແລະ ເອື້ອຍເຮັດຫຍັງ? ຫຼານເຮັດວຽກຫຍັງແດ່ຊ່ວຍອ້າຍ ແລະ ເອື້ອຍ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ວຽກຂອງອ້າຍ ແລະ ເອື້ອຍຖູເຮືອນ, ລ້າງຖ້ວຍ, ຫຼິ້ນຮ່ວມກັບນ້ອງ, ເບິ່ງແຍງນ້ອງ; ຕົນເອງຊ່ວຍ, ອ້າຍ, ເອື້ອຍມ້ຽນຖ້ວຍ, ບ່ວງ ແລະ ຈອກ ຫຼັງຈາກກິນອາຫານ.
- ໃຫ້ເດັກນ້ອຍທາສີຮູບເດັກນ້ອຍໂດຍນຳໃຊ້ສີຕາມໃຈ.

# ການຊ່ວຍເຫຼືອກັນໃນຄອບຄົວ







**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການຊ່ວຍເຫຼືອກັນໃນຄອບຄົວ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ຫຼານເຄີຍຊ່ວຍເຫຼືອຄອບຄົວຫຍັງແດ່?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ການຊ່ວຍເຫຼືອກັນໃນຄອບຄົວແມ່ນຊ່ວຍພໍ່ແມ່ແຕ່ງກິນ, ອະນາໄມເຮືອນ, ເບິ່ງແຍງນ້ອງ, ເກັບມ້ຽນເຄື່ອງຮຽນ ແລະ ເຄື່ອງໃຊ້ຂອງຕົນເອງໃຫ້ເປັນລະບຽບ.
- ໃຫ້ເດັກນ້ອຍທາສີຮູບຄືນໂດຍນຳໃຊ້ສີຕາມໃຈ.

# ການປະຢັດນ້ຳ ແລະ ໄຟ







**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການປະຢັດນ້ຳ ແລະ ໄຟ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ ຫຼານເຫັນຫຍັງ? ຄວນປະຢັດນ້ຳ ແລະ ໄຟແນວໃດ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ການປະຢັດນ້ຳແມ່ນບໍ່ເປີດນ້ຳຫຼິ້ນ, ປິດກັອກນ້ຳໃຫ້ແໜ້ນ ຫຼັງຈາກໃຊ້ແລ້ວ ແລະ ການປະຢັດໄຟບໍ່ຄວນເປີດໂທລະພາບ ແລະ ພັດລົມປະໄວ້.
- ໃຫ້ເດັກນ້ອຍທາສີຮູບເດັກນ້ອຍໂດຍນຳໃຊ້ສີຕາມໃຈ.

# ຍາດຕິພີ່ນ້ອງຂອງພໍ່



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຍາດຕິພີ່ນ້ອງຂອງພໍ່; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນໃຜ? ຍາດຕິພີ່ນ້ອງຂອງພໍ່ມີໃຜແດ່? ພໍ່ຂອງພໍ່ເອີ້ນວ່າແນວໃດ? ແມ່ຂອງພໍ່ເອີ້ນວ່າແນວໃດ? ອ້າຍຂອງພໍ່ເອີ້ນວ່າແນວໃດ? ເອື້ອຍຂອງພໍ່ເອີ້ນວ່າແນວໃດ? ນ້ອງຊາຍຂອງພໍ່ເອີ້ນວ່າແນວໃດ? ນ້ອງສາວຂອງພໍ່ເອີ້ນວ່າແນວໃດ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ຍາດພີ່ນ້ອງຂອງພໍ່ມີພໍ່ປູ່, ແມ່ຍ່າ, ປ້າ, ລຸງ, ອາວ, ອາ; ພໍ່ຂອງພໍ່ເອີ້ນວ່າພໍ່ປູ່, ແມ່ຂອງພໍ່ ເອີ້ນວ່າແມ່ຍ່າ, ອ້າຍຂອງພໍ່ເອີ້ນວ່າລຸງ, ເອື້ອຍຂອງພໍ່ເອີ້ນວ່າປ້າ, ນ້ອງຊາຍຂອງພໍ່ເອີ້ນວ່າອາວ, ນ້ອງສາວຂອງພໍ່ເອີ້ນວ່າອາ.
- ໃຫ້ເດັກນ້ອຍທາສີຮູບຄືນໂດຍນຳໃຊ້ສີຕາມໃຈ.

# ຍາດຕິພີ່ນ້ອງຂອງແມ່



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຍາດຕິພີ່ນ້ອງຂອງແມ່; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກໍາ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄໍາຖາມດັ່ງນີ້: ໃນຮູບນີ້ຫຼານເຫັນໃຜ? ຍາດຕິພີ່ນ້ອງຂອງແມ່ມີໃຜແດ່? ພໍ່ຂອງແມ່ເອີ້ນວ່າແນວໃດ? ແມ່ຂອງແມ່ເອີ້ນວ່າແນວໃດ? ອ້າຍຂອງແມ່ເອີ້ນວ່າແນວໃດ? ເອື້ອຍຂອງແມ່ເອີ້ນວ່າແນວໃດ? ນ້ອງຊາຍຂອງແມ່ເອີ້ນວ່າແນວໃດ? ນ້ອງສາວຂອງແມ່ເອີ້ນວ່າແນວໃດ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ຍາດຕິພີ່ນ້ອງຂອງແມ່ມີພໍ່ເຖົ້າ, ແມ່ເຖົ້າ, ປ້າ, ລຸງ, ນ້າບ່າວ, ນ້າສາວ; ພໍ່ຂອງແມ່ ເອີ້ນວ່າ ພໍ່ເຖົ້າ, ແມ່ຂອງແມ່ເອີ້ນວ່າແມ່ເຖົ້າ, ອ້າຍຂອງແມ່ເອີ້ນວ່າລຸງ, ເອື້ອຍຂອງແມ່ເອີ້ນວ່າ ປ້າ, ນ້ອງຊາຍຂອງແມ່ເອີ້ນວ່ານ້າບ່າວ, ນ້ອງສາວຂອງແມ່ເອີ້ນວ່ານ້າສາວ.
- ໃຫ້ເດັກນ້ອຍທາສີຮູບຄົນໂດຍນໍາໃຊ້ສີຕາມໃຈ.

# ການຊ່ວຍເຫຼືອຍາດຕິພີ່ນ້ອງ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການຊ່ວຍເຫຼືອຍາດຕິພີ່ນ້ອງ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ຫຼານຊ່ວຍເຫຼືອຍາດຕິພີ່ນ້ອງແນວໃດ? ຍາດຕິພີ່ນ້ອງໄດ້ຊ່ວຍເຫຼືອຫຼານຫຍັງແດ່?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ການຊ່ວຍເຫຼືອຍາດຕິພີ່ນ້ອງຕ້ອງແບ່ງປັນອາຫານ ຫຼື ສິ່ງຂອງຕ່າງໆ, ຢ້ຽມຢາມ ແລະ ເບິ່ງແຍງໃນເວລາເຈັບເປັນ.
- ໃຫ້ເດັກນ້ອຍທາສີຮູບຄືນໂດຍນຳໃຊ້ສີຕາມໃຈ.

# ຄວາມອົບອຸ່ນໃນຄອບຄົວ





**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຄວາມອົບອຸ່ນໃນຄອບຄົວ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ເຂົາເຈົ້າກຳລັງເຮັດຫຍັງ? ພໍ່, ແມ່ ເຄີຍອຸ້ມ, ຫອມແກ້ມ ແລະ ແລະກອດຫຼານບໍ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ຄວາມອົບອຸ່ນໃນຄອບຄົວທີ່ສະແດງອອກທາງກາຍມີ ໂອບກອດ, ອູ້ມ, ຫອມແກ້ມ ແລະ ລູບຫົວ; ການສະແດງທາງວາຈາ ໃຊ້ຄຳເວົ້າອ່ອນໂຍນຊົມເຊີຍ, ດີຫຼາຍ, ຄຳຮູ້, ງາມຫຼາຍ, ເກັ່ງຫຼາຍ.
- ໃຫ້ເດັກນ້ອຍທາສີຮູບຄົນໂດຍນຳໃຊ້ສີຕາມໃຈ.

# ການປະຕິບັດຕົນໃນຄອບຄົວ







**ຫົວຂໍ້ ການຮຽນອາທິດທີ 2 ການປະຕິບັດຕົນໃນຄອບຄົວ:**

1. ການກິນ ແລະ ດື່ມ.
2. ການນັ່ງ, ຍ່າງ ແລະ ນອນ.
3 ການຂໍອະນຸຍາດ ແລະ ການຮັບສິ່ງຂອງ.
4. ການນົບ.
5. ການປະຢັດ.

# ການກິນ ແລະ ດື່ມ





**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການປະຕິບັດຕົນໃນການກິນ ແລະ ດື່ມ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ເວລາກິນ ແລະ ດື່ມ ຄວນເຮັດແນວໃດ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ການກິນຄວນກິນອາຫານທີ່ມີປະໂຫຍດ, ກິນຖືກເວລາ, ຕັກອາຫານໃຫ້ພໍດີກິນອີ່ມ, ຫຍໍ້າອາຫານບໍ່ໃຫ້ມີສຽງດັງ, ຫຍໍ້າໃຫ້ແຫຼກແລ້ວຈຶ່ງກືນ, ນຳໃຊ້ບ່ວງກາງຕັກອາຫານ, ບໍ່ໃຫ້ອາຫານຕົກເຮ່ຍ; ການດື່ມ: ຖອກນ້ຳໃສ່ຈອກໃຫ້ພໍດີບໍ່ໃຫ້ນ້ຳເຮ່ຍ, ຈັບຈອກທາງລຸ່ມໃຫ້ແໜ້ນ, ດື່ມນ້ຳຄ່ອຍໆກືນ ບໍ່ໃຫ້ມີສຽງດັງ.
- ໃຫ້ເດັກນ້ອຍທາສີຮູບເດັກນ້ອຍ ໂດຍນຳໃຊ້ສີຕາມໃຈ.

# ການປະຕິບັດຕົນໃນການນັ່ງ







**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການປະຕິບັດຕົນໃນການນັ່ງ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ເວລານັ່ງຕັ່ງ ແລະ ນັ່ງພື້ນຫຼານນັ່ງແນວໃດ? ແມ່ຍິງຄວນນັ່ງແນວໃດ? ຜູ້ຊາຍຄວນນັ່ງແນວໃດ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ການນັ່ງຕັ່ງແມ່ນນັ່ງໃຫ້ຫຼັງຊື່, ຫຍັບຕັ່ງໃຫ້ພໍດີກັບ ໂຕະ, ຫຍັບກະໂພກໃຫ້ຕິດກັບ ບ່ອນອີງຂອງຕັ່ງ, ແຂນທັງສອງເບື້ອງວາງໄວ້ເທິງ ໂຕະ; ການນັ່ງພື້ນແມ່ຍິງນັ່ງພັບແພບ, ຜູ້ຊາຍນັ່ງຂັດສະໝາດ, ນັ່ງຕ່ຳກ່ອນຜູ້ໃຫຍ່.
- ໃຫ້ເດັກນ້ອຍທາສີຮູບຄົນ ໂດຍນຳໃຊ້ສີຕາມໃຈ.

# ການປະຕິບັດຕົນໃນການຍ່າງ ແລະ ການນອນ







**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການປະຕິບັດຕົນໃນການຍ່າງ, ການນອນ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກໍາ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄໍາຖາມດັ່ງນີ້: ໃນຮູບນີ້ເດັກນ້ອຍກໍາລັງເຮັດຫຍັງ? ຫຼານຄວນຍ່າງແນວໃດເວລາກາຍໜ້າຜູ້ໃຫຍ່? ຄວນປະຕິບັດຕົນໃນການນອນແນວໃດ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ການຍ່າງຄວນຍ່າງຢຶດຕົວຊື່, ກ້າວຂາຍ່າງໃຫ້ພໍດີ; ເວລາຍ່າງກາຍຜູ້ໃຫຍ່ຕ້ອງຢໍ້ຕົວ ແລະ ກົ້ມຫົວລົງໜ້ອຍໜຶ່ງ; ການນອນຄວນນອນຢຽດຕົວຊື່, ບໍ່ເອົາຂາກ່າຍຄົນອື່ນ, ນອນແຕ່ ຫົວຄໍ່າ ແລະ ຕື່ນນອນແຕ່ເຊົ້າ.
- ໃຫ້ເດັກນ້ອຍທາສີຮູບຄົນ ໂດຍທາສີຕາມໃຈ.

# ການປະຕິບັດຕົນໃນການຂໍອະນຸຍາດ ແລະ ການຮັບສິ່ງຂອງ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການຂໍອະນຸຍາດ, ການຮັບສິ່ງຂອງ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້:ໃນຮູບນີ້ເດັກນ້ອຍກຳລັງເຮັດຫຍັງ? ຫຼານຄວນເຮັດແນວໃດເມື່ອໄດ້ຮັບສິ່ງຂອງຈາກຜູ້ໃຫຍ່? ຫຼານຕ້ອງການຢືມເຄື່ອງໃຊ້ຄົນອື່ນຫຼານຄວນເວົ້າແນວໃດ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ການຂໍອະນຸຍາດກ່ອນຈະໃຊ້ເຄື່ອງຂອງຄົນອື່ນຄວນຂໍອະນຸຍາດຈາກເຈົ້າຂອງ ເຄື່ອງກ່ອນ; ເມື່ອໄດ້ຮັບສິ່ງຂອງຈາກຜູ້ໃຫຍ່ຕ້ອງຍໍມືນົບ ແລະ ກ່າວຄຳຂອບໃຈ.
- ໃຫ້ເດັກນ້ອຍທາສີຮູບຄົນໂດຍນຳໃຊ້ສີຕາມໃຈ.

# ການນົບ





**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການນົບໄຫວ້ພະສົງ ຫຼື ພະພຸດທະຮູບ, ການນົບຖາມສະບາຍດີ ແລະ ນົບຂໍອະນຸຍາດຜູ້ໃຫຍ່; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ທ່ານເຫັນຫຍັງ? ເວລານົບໄຫວ້ພະສົງ ຫຼື ພະພຸດທະຮູບຄວນນົບແນວໃດ? ນົບຖາມສະບາຍດີ, ນົບຂໍອະນຸຍາດຜູ້ໃຫຍ່ຄວນນົບແນວໃດ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ການນົບໄຫວ້ພະສົງ ຫຼື ພະພຸດທະຮູບຄວນນັ່ງຄຸເຂົ່າ, ຍໍມືນົບ ໂດຍການຍໍມືຊ້າຍ ແລະ ມືຂວາແປະໃສ່ກັນໃຫ້ປາຍມືເທົ່າກັນຢູ່ກາງເອິກ, ຍໍມືຂຶ້ນໃຫ້ປາຍນິ້ວມືຈຸຕີນຜົມແລ້ວກາບລົງສາມເທື່ອ; ການນົບຖາມສະບາຍດີ ແລະ ຂໍອະນຸຍາດຜູ້ໃຫຍ່ຄວນຍົກມືຊ້າຍ ແລະ ມືຂວາແປະໃສ່ກັນໃຫ້ປາຍມືເທົ່າກັນຢູ່ກາງເອິກ, ກົ້ມຫົວລົງໃຫ້ປາຍນິ້ວມືຈຸຫວ່າງຄິ້ວ ຫຼື ຈຸປາຍດັງ.
- ໃຫ້ເດັກນ້ອຍທາສີຮູບຄືນໂດຍນຳໃຊ້ສີຕາມໃຈ.

# ເຄື່ອງຮຽນ ແລະ ການປະຢັດ





**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຊື່ເຄື່ອງຮຽນ ແລະ ການປະຢັດ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ເດັກນ້ອຍກຳລັງເຮັດຫຍັງ? ເຄື່ອງຮຽນຂອງຫຼານມີຫຍັງແດ່? ຫຼານຄວນປະຢັດປຶ້ມ, ສໍ, ໄມ້ບັນທັດແນວໃດ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ຊື່ເຄື່ອງຮຽນມີ ປຶ້ມ, ສໍດຳ, ສໍສີ, ໄມ້ບັນທັດ; ການປະຢັດເຄື່ອງຮຽນ: ບໍ່ຈີກ, ບໍ່ຂີດປຶ້ມຊະຊາຍ, ຂຽນໃຫ້ໝົດທຸກໜ້າ; ສໍດຳ, ສໍສີ, ບໍ່ແຫຼມຫຼິ້ນທີ່ວທີບ, ບໍ່ຫັກໄມ້ບັນທັດ, ເມື່ອໃຊ້ແລ້ວຄວນເກັບມ້ຽນໄວ້ໃຫ້ເປັນລະບຽບ.
- ໃຫ້ເດັກນ້ອຍທາສີຮູບເຄື່ອງຮຽນ ແລະ ເດັກນ້ອຍໂດຍນຳໃຊ້ສີຕາມໃຈ.

# ເຄື່ອງນຸ່ງ ແລະ ການປະຢັດ





**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຊື່ເຄື່ອງນຸ່ງ ແລະ ການປະຢັດ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ເດັກນ້ອຍກຳລັງເຮັດຫຍັງ? ເຄື່ອງນຸ່ງຂອງຫຼານມີຫຍັງແດ່? ຫຼານຄວນປະຢັດເຄື່ອງນຸ່ງແນວໃດ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ຊື່ເຄື່ອງນຸ່ງມີ ໂສ້ງ, ເສື້ອ, ສິ້ນ, ກະໂປ່ງ; ການປະຢັດ ຫຼັງຈາກນຸ່ງແລ້ວຄວນຊັກໃຫ້ສະອາດ, ຕາກໃຫ້ແຫ້ງ ແລະ ພັບໄວ້ເປັນລະບຽບ.
- ໃຫ້ເດັກນ້ອຍທາສີຮູບເຄື່ອງນຸ່ງ ແລະ ເດັກນ້ອຍໂດຍນຳໃຊ້ສີຕາມໃຈ.

# ການປະຢັດເຄື່ອງຫຼິ້ນ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຊື່ເຄື່ອງຫຼິ້ນ ແລະ ການປະຢັດ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ເດັກນ້ອຍກຳລັງເຮັດຫຍັງ? ເຄື່ອງຫຼິ້ນຂອງຫຼານມີຫຍັງແດ່? ຄວນປະຢັດເຄື່ອງຫຼິ້ນແນວໃດ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ຊື່ເຄື່ອງຫຼິ້ນມີຕຸກກະຕາ, ລົດ, ເຄື່ອງຫຼິ້ນເຮືອນນ້ອຍ, ຊຸດຕໍ່ (ຈິກຊໍ); ການປະຢັດເຄື່ອງ ຫຼິ້ນຄວນຫຼິ້ນໃຫ້ຖືກວິທີ, ບໍ່ມ້າງເພ, ຫຼິ້ນແລ້ວຄວນລ້າງ ຫຼື ເຊັດໃຫ້ ສະອາດແລ້ວເອົາໃສ່ຖົງ ຫຼື ກັບເກັບມ້ຽນໄວ້ເປັນລະບຽບ.
- ໃຫ້ເດັກນ້ອຍທາສີຮູບເດັກນ້ອຍໂດຍນຳໃຊ້ສີຕາມໃຈ.

# ເຮືອນ ແລະ ການຮັກສາຄວາມສະອາດ







**ຫົວຂໍ້ການຮຽນ ອາທິດທີ 3 ເຮືອນ:**

1. ເຮືອນ.
2. ເຮືອນໄມ້.
3 ເຮືອນກໍ່ປະສົມໄມ້.
4. ເຮືອນກໍ່.
5. ເຄື່ອງໃຊ້ ແລະການຮັກສາຄວາມສະອາດເຮືອນ.

# ປະເພດຂອງເຮືອນ







**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກປະເພດຂອງເຮືອນ, ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ຫຼານເຫັນເຮືອນປະເພດໃດແດ່?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ປະເພດຂອງເຮືອນປະກອບມີ ເຮືອນກໍ່, ເຮືອນໄມ້ ແລະ ເຮືອນກໍ່ປະສົມໄມ້.
- ໃຫ້ເດັກນ້ອຍທາສີຮູບເຮືອນ ໂດຍນຳໃຊ້ສີຕາມໃຈ.

# ລັກສະນະຂອງເຮືອນ





**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກລັກສະນະ, ສີຂອງເຮືອນ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ເຮືອນຂອງຫຼານມີຈັກຊັ້ນ? ຫຼານເຄີຍເຫັນເຮືອນຊັ້ນດຽວ ຫຼື ເຮືອນສອງຊັ້ນບໍ? ເຮືອນມີສີຫຍັງແດ່?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ລັກສະນະຂອງເຮືອນມີເຮືອນຊັ້ນດຽວ ແລະ ເຮືອນຫຼາຍຊັ້ນ; ສີຂອງເຮືອນມີສີເຫຼືອງ, ບົວ, ຂຽວ, ແດງ.
- ໃຫ້ເດັກນ້ອຍທາສີຮູບເຮືອນໂດຍນຳໃຊ້ສີຕາມໃຈ.

# ເຮືອນໄມ້





**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກລັກສະນະຂອງເຮືອນໄມ້ຊົງລາວເດີມ, ສ່ວນປະກອບ ແລະ ວັດສະດຖີ່ນຳໃຊ້; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ສ່ວນປະກອບຂອງເຮືອນໄມ້ມີຫຍັງແດ່? ວັດສະດຸທີ່ນຳມາໃຊ້ມີຫຍັງແດ່? ລັກສະນະເຮືອນຊົງລາວເດີມເປັນແນວໃດ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ລັກສະນະເຮືອນຊົງລາວເດີມເປັນເຮືອນສູງ ຊັ້ນດຽວ, ກ້ອງຕະລາງບໍ່ມີຝາແອ້ມ, ຫຼັງຄາແຫຼມ, ຫ້ອງນອນນ້ອຍ, ລະບຽງໃຫຍ່, ຂັ້ນໄດຢູ່ນອກເຮືອນ, ເສົາໄມ້; ສ່ວນປະກອບຂອງເຮືອນໄມ້ມີເສົາ, ຂັ້ນໄດ, ພື້ນເຮືອນ, ຝາເຮືອນ, ປະຕູ, ປ່ອງຢ້ຽມ, ເພດານ, ຫຼັງຄາ; ວັດສະດຸທີ່ນຳມາ ໃຊ້ມີ ໄມ້, ເຫຼັກຕາປູ, ສັງກະສີ, ຫຍ້າຄາ.
- ໃຫ້ເດັກນ້ອຍທາສີຮູບເຮືອນໂດຍນຳໃຊ້ສີຕາມໃຈ.

# ເຮືອນກໍ່ປະສົມໄມ້



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກ ລັກສະນະເຮືອນກໍ່ປະສົມໄມ້ ແລະ ວັດສະດຸທີ່ນໍາໃຊ້; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກໍາ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄໍາຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ວັດສະດຸທີ່ໃຊ້ໃນການສ້າງເຮືອນມີຫຍັງແດ່? ລັກສະນະເຮືອນກໍ່ປະສົມໄມ້ເປັນແນວໃດ? ວັດສະດຸທີ່ນໍາໃຊ້ມີຫຍັງແດ່?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ລັກສະນະເຮືອນກໍ່ປະສົມໄມ້ ຫຼື ລາວເດີມສະໄໝໃໝ່ ແມ່ນເຮືອນສູງສອງຊັ້ນ, ຊັ້ນເທິງເຮັດດ້ວຍໄມ້, ຊັ້ນລຸ່ມກໍ່ດ້ວຍດິນຈີ່, ຊີມັງ, ຈໍານວນຫ້ອງມີຫຼາຍ, ໃຊ້ໄມ້ໃນການຕົບແຕ່ງເປັນສ່ວນຫຼາຍ; ສ່ວນປະກອບມີ ເສົາ, ຂັ້ນໄດ, ພື້ນເຮືອນ, ຝາເຮືອນ, ປະຕູ, ປ່ອງຢ້ຽມ, ເພດານ, ສັງກະສີ ຫຼື ກະເບື້ອງ; ວັດສະດຸທີ່ນໍາໃຊ້ມີ ສັງກະສີ ຫຼື ກະເບື້ອງ, ໄມ້, ເຫຼັກ, ດິນຈີ່, ຊີມັງ, ຫີນ ແລະ ຊາຍ.
- ໃຫ້ເດັກນ້ອຍທາສີຮູບເຮືອນໂດຍນໍາໃຊ້ສີຕາມໃຈ.

# ເຮືອນກໍ່



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກລັກສະນະຂອງເຮືອນກໍ່, ສ່ວນປະກອບ ແລະ ວັດສະດຸທີ່ນຳໃຊ້; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ສ່ວນປະກອບຂອງເຮືອນກໍ່ມີຫຍັງແດ່? ລັກສະນະຂອງເຮືອນກໍ່ ເປັນແນວໃດ? ວັດສະດຸທີ່ນຳໃຊ້ມີຫຍັງແດ່?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ລັກສະນະເຮືອນກໍ່ແມ່ນ ຕ່ຳ, ຊັ້ນດຽວ, ສູງຫຼາຍຊັ້ນ, ໂຄງສ້າງເຮັດດ້ວຍເຫຼັກ, ກໍ່ດ້ວຍດິນຈີ່, ຊີມັງ, ມີຫຼາຍຫ້ອງ; ວັດສະດຸທີ່ນຳໃຊ້ມີ ໄມ້, ແກ້ວ, ເຫຼັກ, ສັງກະສີ ຫຼື ກະເບື້ອງ, ດິນຈີ່, ຊີມັງ, ຫີນ ແລະ ຊາຍ.
- ໃຫ້ເດັກນ້ອຍທາສີຮູບເຮືອນໂດຍນຳໃຊ້ສີຕາມໃຈ.

# ເຄື່ອງໃຊ້ ແລະ ການຮັກສາຄວາມສະອາດເຮືອນ





**ຈຸດປະສົງ:** ເພື່ອໃຫ້ເດັກບອກຊື່ເຄື່ອງໃຊ້ ແລະ ການຮັກສາຄວາມສະອາດເຮືອນ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ເຄື່ອງໃຊ້ໃນການຮັກສາຄວາມສະອາດເຮືອນມີຫຍັງແດ່? ຫຼານເຄີຍຊ່ວຍວຽກພໍ່ແມ່ຫຍັງແດ່?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ຊື່ເຄື່ອງໃຊ້ມີຟອຍກວາດພື້ນ, ຊວ້ານຂີ້ເຫຍື້ອ, ກະຕ່າຂີ້ເຫຍື້ອ, ຄຸນ້ຳ, ຜ້າຖູພື້ນ, ຜ້າເຊັດ, ນ້ຳຢາຖູພື້ນ, ຟອຍປັດໃຍແມງມຸມ; ການຮັກສາຄວາມສະອາດເຮືອນຕ້ອງປັດກວາດ, ຖູພື້ນເຮືອນ, ເຊັດປະຕູ ເຊັດປ່ອງຢ້ຽມ, ປັດໄຍແມງມຸມຕາມເພດານ, ຕາມຝາເຮືອນ ແລະ ເກັບມ້ຽນເຄື່ອງໃຊ້ເປັນລະບຽບ.
- ໃຫ້ເດັກນ້ອຍທາສີຮູບຄົນ ແລະ ເຄື່ອງໃຊ້ໂດຍນຳໃຊ້ສີຕາມໃຈ.

# ຫ້ອງໃນເຮືອນ ແລະ ເຄື່ອງໃຊ້









**ຫົວຂໍ້ການຮຽນອາທິດທີ 4 ຫ້ອງໃນເຮືອນ ແລະ ເຄື່ອງໃຊ້:**

1. ຫ້ອງໃນເຮືອນ.
2. ຫ້ອງນອນ.
3 ຫ້ອງຮັບແຂກ.
4. ຫ້ອງແຕ່ງກິນ.
5. ຫ້ອງອາບນ້ຳ ແລະ ຫ້ອງວິດຖ່າຍ.

# ຫ້ອງໃນເຮືອນ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກປະເພດຫ້ອງໃນເຮືອນ, ຂະໜາດ ແລະ ສີ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ເຮືອນຂອງຫຼານມີຫ້ອງແນວນີ້ບໍ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ປະເພດຫ້ອງໃນເຮືອນມີຫ້ອງນອນ, ຫ້ອງຮັບແຂກ, ຫ້ອງແຕ່ງກິນ, ຫ້ອງອາບ ນ້ຳ ແລະ ວິດຖ່າຍ; ຂະໜາດຂອງຫ້ອງມີ ຫ້ອງນ້ອຍ, ໃຫຍ່, ກວ້າງ, ແຄບ; ສີປະກອບມີສີຂາວ, ຂຽວ, ຟ້າ.
- ໃຫ້ເດັກນ້ອຍທາສີຮູບຫ້ອງຕ່າງໆໂດຍນຳໃຊ້ສີຕາມໃຈ.

# ຫ້ອງນອນ





**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກເຄື່ອງໃຊ້ໃນຫ້ອງນອນ, ຄຸນປະໂຫຍດຂອງຫ້ອງນອນ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ຫ້ອງນອນຫຼານ ມີເຄື່ອງໃຊ້ຫຍັງແດ່? ຫ້ອງນອນໃຊ້ໄວ້ເຮັດຫຍັງ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ເຄື່ອງໃຊ້ໃນຫ້ອງນອນປະກອບມີຕຽງ, ຕູ້, ສາດ, ເສື່ອ, ຜ້າກັ້ງ, ຜ້າປູບ່ອນ, ຜ້າຫົ່ມ, ໝອນ ແລະ ມຸ້ງ; ຄຸນປະໂຫຍດແມ່ນໃຊ້ໄວ້ເປັນບ່ອນນອນພັກຜ່ອນ.
- ໃຫ້ເດັກນ້ອຍທາສີຮູບເຄື່ອງໃຊ້ໂດຍນຳໃຊ້ສີຕາມໃຈ.

# ການຮັກສາຄວາມສະອາດຫ້ອງນອນ





**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການຮັກສາຄວາມສະອາດຫ້ອງນອນ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຍັງແດ່? ຫຼານຊ່ວຍພໍ່, ແມ່ ຮັກສາຄວາມສະອາດຫ້ອງນອນແນວໃດ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ການຮັກສາຄວາມສະອາດຫ້ອງນອນປັດກວາດ, ເຊັດຖູບໍລິເວນຫ້ອງນອນ, ຊັກເຄື່ອງນອນໃຫ້ສະອາດ, ຕາກໃຫ້ແຫ້ງດີ ແລະ ເກັບມ້ຽນໃຫ້ເປັນລະບຽບ.
- ໃຫ້ເດັກນ້ອຍທາສີຮູບຄົນໂດຍນຳໃຊ້ສີຕາມໃຈ.

# ຫ້ອງຮັບແຂກ





**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກເຄື່ອງໃຊ້, ຄຸນປະໂຫຍດຫ້ອງຮັບແຂກ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ເຄື່ອງໃຊ້ໃນຫ້ອງຮັບແຂກມີຫຍັງແດ່? ຫ້ອງຮັບແຂກໃຊ້ໄວ້ເຮັດຫຍັງ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ເຄື່ອງໃຊ້ໃນຫ້ອງຮັບແຂກມີໂຕະ, ຕັ່ງ, ຕູ້ໂຊ, ເຕົ້າດອກໄມ້, ໂທລະພາບ, ຕັ່ງນວມ ຫຼື ໂຊຟາ; ຄຸນປະໂຫຍດຂອງຫ້ອງຮັບແຂກໃຊ້ເປັນບ່ອນນັ່ງຮັບແຂກໃນເວລາແຂກມາເຮືອນ ຫຼື ຄົນໃນຄອບຄົວນັ່ງລົມກັນ ແລະ ນັ່ງເບິ່ງໂທລະພາບ.
- ໃຫ້ເດັກນ້ອຍທາສີຮູບເຄື່ອງໃຊ້ໂດຍນຳໃຊ້ສີຕາມໃຈ.

# ການຮັກສາຄວາມສະອາດຫ້ອງຮັບແຂກ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການຮັກສາຄວາມສະອາດໃນຫ້ອງຮັບແຂກ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ຫຼານເຄີຍຊ່ວຍວຽກພໍ່, ແມ່ ອະນາໄມຫ້ອງຮັບແຂກ ເຮັດຫຍັງແດ່?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ການຮັກສາຄວາມສະອາດຫ້ອງຮັບແຂກຕ້ອງປັດກວາດ, ເຊັດຖູ ແລະ ຈັດວາງເຄື່ອງໃຊ້ໃຫ້ເປັນລະບຽບ.
- ໃຫ້ເດັກນ້ອຍທາສີຮູບຄືນໂດຍນຳໃຊ້ສີຕາມໃຈ.

# ຫ້ອງແຕ່ງກິນ





**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກເຄື່ອງໃຊ້, ຄຸນປະໂຫຍດໃນຫ້ອງແຕ່ງກິນ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ເຄື່ອງໃຊ້ໃນຫ້ອງແຕ່ງກິນມີຫຍັງແດ່? ຫ້ອງແຕ່ງກິນໃຊ້ໄວ້ເຮັດຫຍັງ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ເຄື່ອງໃຊ້ໃນຫ້ອງແຕ່ງກິນມີຖ້ວຍ, ຈານ, ບ່ວງ, ຈອງ, ສ້ອມ, ໝໍ້, ຫວດ, ໝໍ້ໜຶ້ງ ເຂົ້າ, ພາເຂົ້າ, ເຕົາໄຟ, ຕິບເຂົ້າ, ຂຽງ, ມີດ ແລະ ພ້າ; ຄຸນປະໂຫຍດຂອງຫ້ອງແຕ່ງກິນແມ່ນໃຊ້ ເປັນບ່ອນຄົວກິນ, ບາງຄັ້ງຄາວກໍນັ່ງກິນ ເຂົ້າ.
- ໃຫ້ເດັກນ້ອຍທາສີຮູບຫ້ອງແຕ່ງກິນ ແລະ ຄົນໂດຍນຳໃຊ້ສີຕາມໃຈ.

# ການຮັກສາຄວາມສະອາດຫ້ອງແຕ່ງກິນ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການຮັກສາຄວາມສະອາດໃນຫ້ອງແຕ່ງກິນ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກໍາ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄໍາຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ຫຼານເຄີຍຊ່ວຍວຽກພໍ່, ແມ່ອະນາໄມຫ້ອງແຕ່ງກິນ ເຮັດຫຍັງແດ່?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ການຮັກສາຄວາມສະອາດຫ້ອງແຕ່ງກິນຕ້ອງປັດກວາດ, ເຊັດຖູ, ລ້າງ ແລະ ເກັບມ້ຽນເຄື່ອງໃຊ້ໃຫ້ຖືກບ່ອນ.
- ໃຫ້ເດັກນ້ອຍທາສີຮູບຄົນ ແລະ ເຄື່ອງໃຊ້ໂດຍນໍາໃຊ້ສີຕາມໃຈ.

# ຫ້ອງອາບນ້ຳ ແລະ ຫ້ອງວິດຖ່າຍ







**ຈຸດປະສົງ:** ເພື່ອໃຫ້ເດັກບອກເຄື່ອງໃຊ້, ຄຸນປະໂຫຍດ, ການຮັກສາຄວາມສະອາດໃນຫ້ອງອາບນ້ຳ ແລະ ວິດຖ່າຍ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ເຄື່ອງໃຊ້ໃນຫ້ອງອາບນ້ຳ ແລະ ວິດຖ່າຍ ມີຫຍັງແດ່? ຫ້ອງນ້ຳໃຊ້ໄວ້ເຮັດຫຍັງ? ຄວນຮັກສາຄວາມສະອາດແນວໃດ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ເຄື່ອງໃຊ້ໃນຫ້ອງນ້ຳມີໄຫນ້ຳ ຫຼື ອ່າງນ້ຳ, ຄຸ, ໂອ, ສະບູ, ຢາສະຜົມ, ຟອຍຖູແຂ້ວ ແລະ ຢາຖູແຂ້ວ; ຄຸນປະໂຫຍດຂອງຫ້ອງນ້ຳໃຊ້ເປັນບ່ອນອາບນ້ຳ; ຫ້ອງວິດຖ່າຍໃຊ້ໄວ້ຖ່າຍໜັກ, ຖ່າຍເບົາ; ການຮັກສາຄວາມສະອາດເຊັດຖູ, ລ້າງໃຫ້ສະອາດ ແລະ ເກັບມ້ຽນເຄື່ອງໃຊ້ໃຫ້ຖືກບ່ອນ.
- ໃຫ້ເດັກນ້ອຍທາສີຮູບເຄື່ອງໃຊ້ໃນຫ້ອງນ້ຳ ແລະ ຄົນໂດຍນຳໃຊ້ສີຕາມໃຈ.